ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ: 0250 /ຈນວ

ນະຄອນຫຼວງວຽງຈັນ, ວັນທີ: 2 9 MAR 2017

# ຂໍ້ຕົກລົງ
# ວ່າດ້ວຍ ການກໍານົດ ແລະ ການຄຸ້ມຄອງທີ່ດິນກະສິກໍາ ແລະ ປ່າໄມ້ ຢູ່ ນະຄອນຫຼວງວຽງຈັນ

- ອີງຕາມ ກົດໝາຍວ່າດ້ວຍ ກະສິກໍາ, ສະບັບເລກທີ 01/98 ສພຊ, ລົງວັນທີ 10/10/1998; ກົດໝາຍວ່າດ້ວຍທີ່ດິນ, ສະບັບເລກທີ 04/ສພຊ, ລົງວັນທີ 21/10/2003; ກົດໝາຍວ່າດ້ວຍ ຊົນລະປະທານ, ສະບັບເລກທີ 26/ສພຊ, ລົງວັນທີ 14/12/2012 ແລະ ກົດໝາຍວ່າດ້ວຍປ່າໄມ້, ສະບັບເລກທີ 06/ສພຊ, ລົງວັນທີ 24/12/2007.
- ອີງຕາມ ແຜນກໍານົດພັດທະນາກະສິກໍາ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ຮອດປີ 2020, ຍຸດທະສາດຮອດປີ 2025, ວິໄສທັດ ຮອດປີ 2030.
- ອີງຕາມ ມະຕິຕົກລົງຂອງກອງປະຊຸມຄະນະບໍລິຫານງານພັກຮ່ວມກັບອົງການປົກຄອງ ນະຄອນຫຼວງວຽງຈັນ, ສະບັບເລກທີ 251/ຄພ.ນວ, ລົງວັນທີ 8/8/2016.
- ອີງຕາມ ມະຕິຕົກລົງ ຂອງກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ I, ຄັ້ງວັນທີ 9-17/1/2017.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການຄຸ້ມຄອງບໍລິຫານ, ການນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ ເພື່ອຮັບປະກັນໃຫ້ການກໍານົດ, ຈັດສັນແບ່ງເຂດ ແລະ ແບ່ງຄວາມຮັບຜິດຊອບ ໃຫ້ພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງຢ່າງລະອຽດ, ແນໃສ່ໃຫ້ມີການປົກປັກຮັກສາ, ຄຸ້ມຄອງ, ພັດທະນາ ແລະ ການຫັນປ່ຽນປະເພດທີ່ດິນ ໃຫ້ສອດຄ່ອງກັບລະບຽບກົດໝາຍ ແລະ ຮັບປະກັນຕາມທິດຍືນຍົງ, ປະກອບສ່ວນຢ່າງແຂງແຮງ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາ ນະຄອນຫຼວງວຽງຈັນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ສີວິໄລ.

**ມາດຕາ 2. ການອະທິບາຍຄໍາສັບ**

2.1 ທີ່ດິນກະສິກໍາ: ແມ່ນທີ່ດິນທີ່ໄດ້ກໍານົດໄວ້ ເພື່ອນໍາໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ ແລະ ການຄົ້ນຄວ້າທົດລອງ ດ້ານກະສິກໍາ ລວມທັງທີ່ດິນ ຊົນລະປະທານ.

2.2 ທີ່ດິນປ່າໄມ້: ແມ່ນເນື້ອທີ່ດິນທຸກຕອນທີ່ມີປ່າໄມ້ປົກຄຸມຢູ່ ຫຼື ທີ່ດິນບໍ່ມີປ່າໄມ້ປົກຄຸມເຊິ່ງລັດໄດ້ກໍານົດໃຫ້ເປັນດິນປ່າໄມ້ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍປ່າໄມ້.

2.3 ການກຳນົດ: ໝາຍເຖິງການກຳນົດຂອບເຂດ ແລະ ປະເພດການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ຕາມຈຸດພິເສດ ແລະ ເງື່ອນໄຂຕົວຈິງ ເພື່ອວາງແຜນຄຸ້ມຄອງ ແລະ ນຳໃຊ້ຢ່າງມີປະສິດທິຜົນ.

2.4 ການຄຸ້ມຄອງ: ໝາຍເຖິງ ການຈັດສັນ, ພັດທະນາ ແລະ ປົກປັກຮັກສາ ໂດຍການວາງລະບຽບການ ກຳນົດມາດຕະການໃນການຄຸ້ມຄອງ ແລະ ຕິດຕາມກວດກາການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ໃຫ້ມີປະສິດທິຜົນ, ມີຄວາມສະຫງົບ, ຍຸຕິທຳ ແລະ ຖືກຕ້ອງຕາມເປົ້າໝາຍ.

**ມາດຕາ 3. ນະໂຍບາຍ ກ່ຽວກັບການຄຸ້ມຄອງທີ່ດິນກະສິກຳ ແລະ ປ່າໄມ້**

ສຳຫຼວດ, ຈັດສັນ, ກຳນົດແບ່ງເຂດ ແລະ ປັກຫຼັກໝາຍທີ່ດິນກະສິກຳ ແລະ ປ່າໄມ້ (ເຂດຜະລິດສະບຽງອາຫານ, ເຂດຜະລິດເປັນສິນຄ້າ ແລະ ເຂດສະຫງວນ), ວາງແຜນ ແລະ ຄຸ້ມຄອງການນຳໃຊ້ໃຫ້ສອດຄ່ອງກັບເງື່ອນໄຂ, ທີ່ຕັ້ງ ແລະ ທ່າແຮງບົ່ມຊ້ອນ ບົນພື້ນຖານຄວາມເປັນເອກະພາບກັບບັນດາພະແນກການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ, ຮັບປະກັນການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ແລະ ປ່າໄມ້ ໃຫ້ສາມາດຕອບສະໜອງການຜະລິດສະບຽງອາຫານ ແລະ ປົກປັກຮັກສາຊັບພະຍາກອນປ່າໄມ້ ຕາມທິດທີ່ຍືນຍົງ.

**ມາດຕາ 4. ຫຼັກການຄຸ້ມຄອງທີ່ດິນກະສິກຳ ແລະ ປ່າໄມ້**

ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງຢ່າງເຂັ້ມງວດ, ມີປະຊາທິປະໄຕ, ຮັບປະກັນຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງນະຄອນຫຼວງວຽງຈັນ, ສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນ ແລະ ການຈັດຕັ້ງທຸກຂັ້ນ ໃນການຈັດຕັ້ງປະຕິບັດ ແລະ ຮັບປະກັນຜົນປະໂຫຍດຂອງລັດ ການຈັດຕັ້ງ, ບຸກຄົນ ແລະ ຫົວໜ່ວຍການຜະລິດຕ່າງໆ ທີ່ປະກອບສ່ວນເຂົ້າໃນການຄຸ້ມຄອງທີ່ດິນກະສິກຳ ແລະ ປ່າໄມ້.

**ມາດຕາ 5. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ທົ່ວໄປ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທົ່ວນະຄອນຫຼວງວຽງຈັນ.

## ໝວດທີ 2
## ການກຳນົດ ທີ່ດິນກະສິກຳ ແລະ ປ່າໄມ້

**ມາດຕາ 6. ການກຳນົດທີ່ດິນກະສິກຳ ແລະ ປ່າໄມ້**

ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ເປັນໃຈກາງໃນການປະສານສົມທົບກັບບັນດາພະແນກການ ແລະ ເມືອງ ທີ່ກ່ຽວຂ້ອງ ເພື່ອລົງສຳຫຼວດ, ຈັດສັນ, ກຳນົດແບ່ງເຂດ ແລະ ປັກຫຼັກໝາຍທີ່ດິນກະສິກຳ ແລະ ປ່າໄມ້ ທົ່ວນະຄອນຫຼວງວຽງຈັນ ໃຫ້ຊັດເຈນ ເພື່ອວາງແຜນຄຸ້ມຄອງ ແລະ ນຳໃຊ້ຢ່າງເໝາະສົມ ເຊັ່ນ: ທີ່ດິນເຂດສະຫງວນ, ທີ່ດິນເຂດຜະລິດສະບຽງອາຫານ ແລະ ທີ່ດິນເຂດຜະລິດເປັນສິນຄ້າ, ທີ່ດິນເຂດປ່າສະຫງວນ ແລະ ທີ່ດິນເຂດປ່າຟື້ນຟູ.

**ມາດຕາ 7. ເນື້ອທີ່ດິນກະສິກຳ ແລະ ປ່າໄມ້**

7.1 ເນື້ອທີ່ດິນກະສິກຳ ທົ່ວນະຄອນຫຼວງວຽງຈັນ ມີທັງໝົດ 97,669.44 ເຮັກຕາ, ຄື: 1) ເມືອງຈັນທະບູລີ ມີ 228.00 ເຮັກຕາ, 2) ເມືອງ ສີໂຄດຕະບອງ ມີ 2,692.00 ເຮັກຕາ, 3) ເມືອງໄຊເສດຖາ ມີ 2,230.69 ເຮັກຕາ, 4) ເມືອງ ສີສັດຕະນາກ ມີ 248.00 ເຮັກຕາ, 5) ເມືອງ ນາຊາຍທອງ ມີ 12,351.00 ເຮັກຕາ, 6) ເມືອງ ໄຊທານີ ມີ 19,556.75 ເຮັກຕາ, 7) ເມືອງ ຫາດ

ຊາຍຟອງ ມີ 8,448.00 ເຮັກຕາ, 8) ເມືອງ ສັງທອງ ມີ 30,018.00 ເຮັກຕາ ແລະ 9) ເມືອງ ປາກງື່ມ ມີ 21,897.00ເຮັກຕາ.

7.2 ເນື້ອທີ່ດິນປ່າໄມ້ ທີ່ວນະຄອນຫຼວງວຽງຈັນ ມີທັງໝົດ 150,976.84 ເຮັກຕາ, ຄື: 1) ເມືອງ ຈັນທະບູລີ ມີ 5.00 ເຮັກຕາ, 2) ເມືອງ ສີໂຄດຕະບອງ ມີ 6,874.00 ເຮັກຕາ, 3) ເມືອງ ໄຊເສດຖາ ມີ 996.18 ເຮັກຕາ, 4) ເມືອງ ນາຊາຍທອງ ມີ 72,111.00 ເຮັກຕາ, 5) ເມືອງ ໄຊທານີ ມີ 1,229.66 ເຮັກຕາ, 6) ເມືອງ ຫາດຊາຍຟອງ ມີ 4,256.00 ເຮັກຕາ, 7) ເມືອງ ສັງທອງ ມີ 36,329.00 ເຮັກຕາ ແລະ 8) ເມືອງ ປາກງື່ມ ມີ 29,176.00 ເຮັກຕາ.

**ມາດຕາ 8. ເນື້ອທີ່ ແລະ ຂອບເຂດທີ່ດິນກະສິກຳ ແລະ ປ່າໄມ້ ທີ່ຈະສະຫງວນໄວ້**

8.1 ເນື້ອທີ່ ແລະ ຂອບເຂດທີ່ດິນກະສິກຳ ທີ່ຈະສະຫງວນໄວ້ເພື່ອຜະລິດສະບຽງອາຫານ ແລະ ຜະລິດເປັນສິນຄ້າ ໃນຕໍ່ໜ້າ ມີທັງໝົດ 73,089.45 ເຮັກຕາ ມີດັ່ງນີ້:

1. ເມືອງ ສີໂຄດຕະບອງ ມີ 852.00 ເຮັກຕາ, ກວມເອົາ 4 ກຸ່ມບ້ານ, ລວມມີ 10 ບ້ານ: ບ້ານ ໜອງດາ, ຫ້ວຍຫ້ອມ, ໂພນສີມບູນ, ຕາດທອງ, ອ່າງໃຫຍ່, ໃໝ່, ດອນຊີງຊູ້, ວຽງຄຳ, ຈຳປາ ແລະ ບ້ານ ປາກທ້າງ.
2. ເມືອງ ໄຊເສດຖາ ມີ 1,461.00 ເຮັກຕາ, ກວມເອົາ 3 ກຸ່ມບ້ານ, ມີ 12 ບ້ານ ຄື: ບ້ານ ຊຽງດາ, ເມືອງນ້ອຍ, ໂນນຫວາຍ, ນາຄວາຍໃຕ້, ນາຄວາຍກາງ, ໄຣຄຳ, ໂຊກນ້ອຍ, ໂຊກໃຫຍ່, ໂພນທອງ ນາບຽນ, ນາໂນ ແລະ ບ້ານ ຈອມສີ.
3. ເມືອງ ນາຊາຍທອງ ມີ 11,733.45 ເຮັກຕາ, ກວມເອົາເຂດໂຄງການຊົນລະປະທານນ້ຳງຶມ (ກຸ່ມບ້ານ ອີ່ໄລ+ນາຂ່າ) ມີ 21 ບ້ານ, ໂຄງການນ້ຳຊວງ (ກຸ່ມບ້ານ ໂພນທອງ) ມີ 10 ບ້ານ, ໂຄງການຊົນລະປະທານຫ້ວຍຊອນ - ຫ້ວຍຊົ້ວ (ກຸ່ມບ້ານ ນ້ຳກ້ຽງ) ມີ 8 ບ້ານ ແລະ ກຸ່ມບ້ານ ນາຊາຍ ມີ 3 ບ້ານ.
4. ເມືອງ ໄຊທານີ ມີ 8,142.00 ເຮັກຕາ, ກວມເອົາ 6 ກຸ່ມບ້ານ ຄື: ກຸ່ມບ້ານ ຫ້ວຍຈຽມ, ກຸ່ມບ້ານ ດົງບັງ, ກຸ່ມບ້ານ ທ່າງ່ອນ, ກຸ່ມບ້ານ ເອີນຄຳ, ກຸ່ມບ້ານ ຫາດກ້ຽງ ແລະ ກຸ່ມບ້ານ ຊ້າງ.
5. ເມືອງ ຫາດຊາຍຟອງ ມີ 4,900.00 ເຮັກຕາ, ກວມເອົາ 3 ກຸ່ມບ້ານ ຄື: ກຸ່ມ 3 (ບ້ານ ໂຄກຊາຍ ແລະ ບ້ານ ສີຖານໃຕ້), ກຸ່ມ 6 (ບ້ານ ທ່າພະ, ໜອງພິງ, ປາກເປົ່ງ ແລະ ບ້ານ ຖິ່ນແທ່ນ), ແລະ ກຸ່ມ 7 (ບ້ານ ສີມມະໂນເໜືອ, ສີມມະໂນໃຕ້, ຄວາຍແດງ ແລະ ບ້ານ ນາລ້ອງ).
6. ເມືອງ ສັງທອງ ມີ 28,517.00 ເຮັກຕາ, ກວມເອົາຂອບເຂດ ບ້ານ ສຳພັນນາ, ແກ້ງໝີ້, ໂຄກເພີ້ງ, ສະໄກ, ອ່າງນ້ອຍ, ເພຍລາດ, ວັງມ້າ, ນາສາວນາງ, ໃຫຍ່ນາຈະເລີນ, ເຕົາໄຫ, ໂຄກແຮ່ ແລະ ບ້ານ ທ່ານາສາ.
7. ເມືອງ ປາກງື່ມ ມີ 17,484.00 ເຮັກຕາ, ກວມເອົາ 6 ກຸ່ມບ້ານ ຄື: ກຸ່ມບ້ານ ປາກງື່ມ, ກຸ່ມບ້ານ ໂດນ, ກຸ່ມບ້ານ ດົງກະລຶມ, ກຸ່ມບ້ານ ນາຝາຍ, ກຸ່ມບ້ານ ນາຊອນ ແລະ ກຸ່ມບ້ານ ສີນໄຊ.

8.2 ເນື້ອທີ່ ແລະ ຂອບເຂດທີ່ດິນປ່າໄມ້ ທີ່ຈະສະຫງວນໄວ້ເພື່ອຄຸ້ມຄອງ ແລະ ອະນຸລັກ ໃນຕໍ່ໜ້າ ມີທັງໝົດ 150,976.84 ເຮັກຕາ ມີດັ່ງນີ້:

1. ເມືອງ ສີໂຄດຕະບອງ ມີ 1,089.20 ເຮັກຕາ, ກວມເອົາ ບ້ານ ໃໝ່, ປາກທ້າງ, ຫ້ວຍຫ້ອມ ແລະ ບ້ານ ອ່າງ.
2. ເມືອງ ໄຊເສດຖາ ມີ 589.00 ເຮັກຕາ, ກວມເອົາ ບ້ານ ດູງ, ນາໄຫ, ຈອມສີ ແລະ ບ້ານ ນາໂນ.
3. ເມືອງ ນາຊາຍທອງ ມີ 68,505.45 ເຮັກຕາ, ກວມເອົາ ບ້ານ ນາຊາຍເໜືອ, ນາຍາງ, ອ່າງນ້ຳງຶມ ນາຂ່າ, ປາກແຮດ ແລະ ບ້ານ ອີ່ໄລໃຕ້.

4. ເມືອງ ໄຊທານີ ມີ 500.00 ເຮັກຕາ, ກວມເອົາ ບ້ານ ນາໂງມເກົ່າ, ນາໂງມໃໝ່, ນາຄາຍ, ນາຕານ ທົ່ວຂົ່ວ ແລະ ບ້ານ ຊໍາບອນ.
5. ເມືອງ ຫາດຊາຍຟອງ ມີ 2,350.00 ເຮັກຕາ, ກວມເອົາ ກຸ່ມບ້ານ ສາລາຄໍາ, ກຸ່ມບ້ານ ທ່າພະ ແລະ ກຸ່ມບ້ານ ນາລ້ອງ.
6. ເມືອງ ສັງທອງ ມີ 37,347.00 ເຮັກຕາ, ກວມເອົາຂອບເຂດ ບ້ານ ຫ້ວຍຫຼ້າ, ຫ້ວຍຫາງ, ໂຄກແຫ່, ນາລາດ, ຊໍ້, ວັງມ້າ, ກ້ວຍ, ນາປໍ, ກຸ່ມບ້ານ ເພຍລາດ ແລະ ກຸ່ມບ້ານ ນາລາດ.
7. ເມືອງ ປາກງື່ມ ມີ 25,137.00 ເຮັກຕາ, ກວມເອົາຂອບເຂດ ບ້ານ ນໍ້າບູນ, ໂພນຂາມ, ປາກງື່ມ ດອນສ້າງໄພ, ທ່າຊ້າງ, ໝາກຮຽວ, ໂດນ, ທ່າກົກໄຮ ແລະ ເຂດລາວປ່າໂກ.

ສ່ວນ ເມືອງ ຈັນທະບູລີ ແລະ ເມືອງ ສີສັດຕະນາກ ແມ່ນບໍ່ໄດ້ກໍານົດເນື້ອທີ່ດິນກະສິກໍາ ແລະ ປ່າໄມ້ ທີ່ຈະສະຫງວນໄວ້ ເນື່ອງຈາກສອງເມືອງດັ່ງກ່າວ ເປັນທີ່ຕັ້ງຂອງການພັດທະນາພື້ນຖານໂຄງລ່າງຂອງນະຄອນຫຼວງວຽງຈັນ.

## ໝວດທີ 3
## ການຄຸ້ມຄອງ ແລະ ກວດກາ ທີ່ດິນກະສິກໍາ ແລະ ປ່າໄມ້

**ມາດຕາ 9. ອົງການຄຸ້ມຄອງທີ່ດິນກະສິກໍາ ແລະ ປ່າໄມ້ ໃນນະຄອນຫຼວງວຽງຈັນ**

ການຄຸ້ມຄອງທີ່ດິນກະສິກໍາ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ປະກອບມີ:

9.1 ຂັ້ນນະຄອນຫຼວງ ແມ່ນ ພະແນກກະສິກໍາ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ (ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກໍາ).

9.2 ຂັ້ນເມືອງ ແມ່ນ ຫ້ອງການກະສິກໍາ ແລະ ປ່າໄມ້ (ໜ່ວຍງານຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກໍາ) 9 ຕົວເມືອງ.

**ມາດຕາ 10. ສິດ ແລະ ໜ້າທີ່ ຂອງ ອົງການຄຸ້ມຄອງທີ່ດິນກະສິກໍາ ແລະ ປ່າໄມ້**

10.1 ສິດ ແລະ ໜ້າທີ່ ຂອງ ອົງການຄຸ້ມຄອງທີ່ດິນກະສິກໍາ ແລະ ປ່າໄມ້ ຂັ້ນນະຄອນຫຼວງ ມີດັ່ງນີ້:

1. ເປັນຜູ້ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ຕິດຕາມກວດກາການນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ ທົ່ວ ນະຄອນຫຼວງວຽງຈັນ ໃຫ້ຖືກຕ້ອງຕາມເປົ້າໝາຍ;
2. ເປັນເຈົ້າການໃນການປະສານສົມທົບກັບບັນດາພະແນກການ ແລະ ເມືອງ ທີ່ກ່ຽວຂ້ອງ ເພື່ອລົງສໍາຫຼວດ, ຈັດສັນ, ກໍານົດແບ່ງເຂດ ແລະ ປັກຫຼັກໝາຍທີ່ດິນກະສິກໍາ ແລະ ປ່າໄມ້ ທົ່ວ ນະຄອນຫຼວງວຽງຈັນ ໃຫ້ຊັດເຈນ;
3. ເຂົ້າຮ່ວມຄົ້ນຄວ້າກັບພາກສ່ວນທີ່ກ່ຽວຂ້ອງ ໃນການທົບທວນບົດວິພາກເສດຖະກິດ, ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ຈາກການສະເໜີລົງທຶນ, ເຊົ່າ ຫຼື ສໍາປະທານທີ່ດິນກະສິກໍາ ແລະ ປ່າໄມ້ ພ້ອມທັງຕິດຕາມກວດກາການນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ ຂອງນັກລົງທຶນ ແລະ ຜູ້ປະກອບການ ໃຫ້ຖືກຕ້ອງຕາມສັນຍາ ແລະ ກົດໝາຍ;
4. ສະເໜີລາຍງານ ສະພາບການເຄື່ອນໄຫວວຽກງານ ຕໍ່ອົງການປົກຄອງນະຄອນຫຼວງວຽງຈັນ ເພື່ອຂໍທິດຊີ້ນໍາ ສໍາລັບການຈັດຕັ້ງປະຕິບັດ.

10.2 ສິດ ແລະ ໜ້າທີ່ ຂອງ ອົງການຄຸ້ມຄອງທີ່ດິນກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ມີດັ່ງນີ້:

1. ປະສານສົມທົບກັບອໍານາດການປົກຄອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນທ້ອງຖິ່ນຕົນ ເພື່ອຄຸ້ມຄອງການນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ ໃຫ້ຖືກຕ້ອງ ແລະ ແທດເໝາະກັບເງື່ອນໄຂຕົວຈິງ;

2. ເປັນເຈົ້າການໃນການລົງສຳຫຼວດ, ຈັດສັນ, ກຳນົດແບ່ງເຂດ, ປັກຫຼັກໝາຍ ແລະ ຂຶ້ນທະບຽນທີ່ດິນກະສິກຳ ແລະ ປ່າໄມ້ ໃຫ້ຊັດເຈນ (ເຂດຜະລິດສະບຽງອາຫານ, ເຂດຜະລິດເປັນສິນຄ້າ ແລະ ເຂດສະຫງວນ);
3. ເຂົ້າຮ່ວມຄົ້ນຄວ້າກັບພາກສ່ວນທີ່ກ່ຽວຂ້ອງ ໃນການທົບທວນບົດວິພາກເສດຖະກິດ, ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກການສະເໜີລົງທຶນ, ເຊົ່າ ຫຼື ສຳປະທານທີ່ດິນກະສິກຳ ແລະ ປ່າໄມ້ ພ້ອມທັງຕິດຕາມກວດກາການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ຂອງນັກລົງທຶນ ແລະ ຜູ້ປະກອບການ ໃຫ້ຖືກຕ້ອງຕາມສັນຍາ ແລະ ກົດໝາຍ;
4. ສະເໜີລາຍງານ ຕໍ່ການຈັດຕັ້ງທັງສາຍຕັ້ງ ແລະ ສາຍຂວາງ ຂອງຕົນ ເພື່ອຂໍທິດຊີ້ນຳສາລັບການຈັດຕັ້ງປະຕິບັດ.

**ມາດຕາ 11.** ອົງການກວດກາທີ່ດິນກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ

ອົງການກວດກາທີ່ດິນກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ປະກອບມີ:

11.1 ຂັ້ນ ນະຄອນຫຼວງ ແມ່ນ ອົງການປົກຄອງ (ພະແນກກວດກາລັດ ນະຄອນຫຼວງວຽງຈັນ ແລະ ຂະແໜງກວດກາລັດ ປະຈຳພະແນກກະສິກຳ ແລະ ປ່າໄມ້).

11.2 ຂັ້ນ ເມືອງ ແມ່ນ ອົງການປົກຄອງເມືອງ (ຫ້ອງການກວດກາລັດ ເມືອງ ແລະ ໜ່ວຍງານກວດກາລັດ ປະຈຳຫ້ອງການກະສິກຳ ແລະ ປ່າໄມ້ 9 ຕົວເມືອງ).

**ມາດຕາ 12.** ສິດ ແລະ ໜ້າທີ່ ຂອງອົງການກວດກາທີ່ດິນກະສິກຳ ແລະ ປ່າໄມ້

12.1 ສິດ ແລະ ໜ້າທີ່ ຂອງ ອົງການກວດກາທີ່ດິນກະສິກຳ ແລະ ປ່າໄມ້ ຂັ້ນນະຄອນຫຼວງ ມີດັ່ງນີ້:
1. ຈັດຕັ້ງ, ອຳນວຍຄວາມສະດວກ, ຄວບຄຸມ ແລະ ຕິດຕາມກວດກາ ການເຄື່ອນໄຫວປະຕິບັດໜ້າທີ່ໃນການຄຸ້ມຄອງທີ່ດິນກະສິກຳ ແລະ ປ່າໄມ້ ຂອງ ອົງການຄຸ້ມຄອງທີ່ດິນກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ;
2. ພິຈາລະນາ, ໃຫ້ຄຳແນະນຳ ແລະ ແກ້ໄຂ ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບການຄຸ້ມຄອງ ທີ່ດິນກະສິກຳ ແລະ ປ່າໄມ້ ທີ່ນະຄອນຫຼວງວຽງຈັນ.

12.2 ສິດ ແລະ ໜ້າທີ່ ຂອງ ອົງການກວດກາ ທີ່ດິນກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ມີດັ່ງນີ້:
1. ຈັດຕັ້ງ, ອຳນວຍຄວາມສະດວກ, ຄວບຄຸມ ແລະ ຕິດຕາມກວດກາ ການເຄື່ອນໄຫວປະຕິບັດໜ້າທີ່ໃນການຄຸ້ມຄອງ ທີ່ດິນກະສິກຳ ແລະ ປ່າໄມ້ ຂອງ ອົງການຄຸ້ມຄອງ ທີ່ດິນກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;
2. ພິຈາລະນາ, ໃຫ້ຄຳແນະນຳ ແລະ ແກ້ໄຂ ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບການຄຸ້ມຄອງ ທີ່ດິນກະສິກຳ ແລະ ປ່າໄມ້ ຢູ່ທ້ອງຖິ່ນຕົນ.

**ມາດຕາ 13.** ການຫັນປ່ຽນປະເພດທີ່ດິນກະສິກຳ ແລະ ປ່າໄມ້

13.1 ພະແນກກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ ໃນການພິຈາລະນາການອອກອະນຸຍາດຫັນປ່ຽນປະເພດທີ່ດິນກະສິກຳ ແລະ ປ່າໄມ້ ໄປເປັນທີ່ດິນປະເພດອື່ນ, ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍ ວ່າດ້ວຍກະສິກຳ, ສະບັບເລກທີ 01/98 ສພຊ, ລົງວັນທີ 10/10/1998, ມາດຕາ 14 ຂອງກົດໝາຍ ວ່າດ້ວຍທີ່ດິນ, ສະບັບເລກທີ 04/ສພຊ, ລົງວັນທີ 21/10/2003, ມາດຕາ 71 ແລະ ມາດຕາ 72 ຂອງກົດໝາຍວ່າດ້ວຍປ່າໄມ້, ສະບັບເລກທີ 06/ສພຊ, ລົງວັນທີ 24/12/2007;

13.2 ບັນດາພະແນກການທີ່ກ່ຽວຂ້ອງ ເຊັ່ນ: ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກອຸດສາຫະກຳ ແລະ

ການຄ້າ ນະຄອນຫຼວງວຽງຈັນ, ຕະຫຼອດຮອດ ບັນດາເມືອງ ກ່ອນຈະອອກອະນຸຍາດ ເຊັ່ນ: ອອກສິດໃຊ້, ສິດນຳໃຊ້ທີ່ດິນມອບໂອນທີ່ດິນ (ຍົກເວັ້ນກໍລະນີຍັງຮັກສາຮູບແບບການນຳໃຊ້ເປັນດິນກະສິກຳຄືເກົ່າ), ຈີກດິນ, ປັບໜ້າດິນ, ຖົມດິນ, ປຸກສ້າງ ແລະ ອະນຸຍາດດຳເນີນທຸລະກິດຕ່າງໆ ໃສ່ທີ່ດິນກະສິກຳ ແລະ ປ່າໄມ້ ໃນນະຄອນຫຼວງວຽງຈັນ ຕ້ອງປະສານສົມທົບ ແລະ ເຫັນດີເປັນເອກະພາບກັບ ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ;

13.3 ອົງການປົກຄອງ 9 ຕົວເມືອງ ເປັນເຈົ້າການໃນການຕິດຕາມກວດກາ ແລະ ຄົ້ນຄວ້າຜ່ານເອກະສານຂໍອະນຸຍາດຫັນປ່ຽນປະເພດທີ່ດິນກະສິກຳ ແລະ ປ່າໄມ້ ໄປເປັນທີ່ດິນປະເພດອື່ນ ເພື່ອໃຫ້ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ເປັນຜູ້ອອກອະນຸຍາດ;

13.4 ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ບັນດາຫົວໜ່ວຍທຸລະກິດຕ່າງໆ ທີ່ມີຈຸດປະສົງໃນການຫັນປ່ຽນປະເພດທີ່ດິນກະສິກຳ ແລະ ປ່າໄມ້ ໄປເປັນທີ່ດິນປະເພດອື່ນ ຕ້ອງສະເໜີຕໍ່ ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ. ພະແນກກະສິກຳ ແລະ ປ່າໄມ້ ຈຶ່ງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ພິຈາລະນາ ຕາມລະບຽບການ.

ມາດຕາ 14. ຂໍ້ຫ້າມ

14.1 ຫ້າມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ບັນດາຫົວໜ່ວຍທຸລະກິດຕ່າງໆ ນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ເຂົ້າໃນເປົ້າໝາຍອື່ນ ເຊັ່ນ: ຫັນປ່ຽນເປັນດິນປຸກສ້າງ, ດິນອຸດສາຫະກຳ ຫຼື ນຳໃຊ້ເພື່ອດຳເນີນທຸລະກິດດ້ານອື່ນໆ ໂດຍບໍ່ໄດ້ຮັບອະນຸຍາດຈາກ ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ;

14.2 ບໍ່ອະນຸຍາດໃຫ້ຫັນປ່ຽນປະເພດທີ່ດິນໃນເຂດຊົນລະປະທານ ທີ່ສາມາດນຳໃຊ້ນ້ຳໄດ້ປົກກະຕິ ໄປເປັນທີ່ດິນປຸກສ້າງ, ທີ່ດິນອຸດສາຫະກຳ ແລະ ທີ່ດິນປະເພດອື່ນໆ, ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 52, ຂໍ້ 13 ຂອງກົດໝາຍວ່າດ້ວຍຊົນລະປະທານ, ສະບັບເລກທີ 26/ສພຊ, ລົງວັນທີ 14/12/2012;

14.3 ຫ້າມຫັນປ່ຽນປະເພດທີ່ດິນກະສິກຳ ແລະ ປ່າໄມ້ ທີ່ຢູ່ໃນເຂດສະຫງວນຕ່າງໆ ທົ່ວນະຄອນຫຼວງວຽງຈັນ ເຂົ້າໃນເປົ້າໝາຍອື່ນ. ໃນກໍລະນີມີຄວາມຈຳເປັນໃນການພັດທະນາ ຕ້ອງໄດ້ຄົ້ນຄວ້າປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳສະເໜີຂຶ້ນເທິງພິຈາລະນາ.

## ໝວດທີ 4
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 15. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການກຳນົດ ແລະ ຄຸ້ມຄອງທີ່ດິນກະສິກຳ ແລະ ປ່າໄມ້, ປະກອບສ່ວນເຂົ້າໃນການຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ການຜະລິດກະສິກຳຢ່າງມີປະສິດທິຜົນ, ປົກປັກຮັກສາສິ່ງແວດລ້ອມ ແລະ ດຳເນີນກິດຈະການດ້ານກະສິກຳ ຢ່າງຖືກຕ້ອງຕາມລະບຽບກົດໝາຍ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຕາມຄວາມເໝາະສົມ.

ມາດຕາ 16. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຫ້າມທີ່ໄດ້ລະບຸໄວ້ໃນຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ປັບໃໝ. ສຳລັບຜູ້ທີ່ລະເມີດຂໍ້ຫ້າມກ່ຽວກັບທີ່ດິນກະສິກຳຈະຖືກປັບໃໝ ຫ້າເທົ່າ ຂອງຜົນຜະລິດສະເລ່ຍໃນປີນັ້ນ. ຖ້າຍັງບໍ່ມີການປ່ຽນແປງຈະຖືກປັບໃໝ ສອງສ່ວນຮ້ອຍ

ຂອງມູນຄ່າທີ່ດິນ ຕາມການປະເມີນໃນໄລຍະເວລາ ແລະ ທ້ອງຖິ່ນນັ້ນ. ໃນກໍລະນີບໍ່ເຂັດຫຼາບ ຈະຖືກຖອນສິດນຳໃຊ້ ຫຼື ສິດໃຊ້ທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທີ່ດິນ, ສະບັບເລກທີ 88/ນຍ, ລົງວັນທີ 3/6/2008. ສຳລັບຜູ້ທີ່ລະເມີດຂໍ້ຫ້າມກ່ຽວກັບທີ່ດິນປ່າໄມ້ ກໍ່ຈະຖືກປະຕິບັດມາດຕະການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 125, 126 ແລະ ມາດຕາ 127 ຂອງກົດໝາຍ ວ່າດ້ວຍປ່າໄມ້, ສະບັບເລກທີ 06/ສພຊ, ລົງວັນທີ 24/12/2007.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 17. ການຈັດຕັ້ງປະຕິບັດ**

ພະແນກກະສິກຳ ແລະ ປ່າໄມ້ ຕ້ອງປະສານສົມທົບກັບ ບັນດາພະແນກການ, ເມືອງ, ອົງການທຽບເທົ່າ, ບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 18. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ເຈົ້າຄອງນະຄອນຫຼວງວຽງຈັນ

ແກ້ວພິລາວັນ ອາໄພລາດ